Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.
Tel/fax: 021 732 162 Mobile: 020 5526277
Email: leap@laoex.org
Email: cetdu@laoex.org

# ຂໍ້ແນະນຳ

# ເຕັກນິກການປູກໝາກມັງກອນ



ເອກະສານ ປະກອບການຝຶກອົບຮົມ 30:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຢວກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 30:
# ແນະນຳເຕັກນິກການປູກໝາກມັງກອນ

## ສາລະບານ


ລັກສະນະດອກ ແລະໝາກຂອງໝາກມັງກອນ.....2

ວິວັດທະນາການຂອງດອກ.....3

ວິທີການປູກ.....4

ດິນທີ່ເໝາະສົມແກ່ການປູກໝາກມັງກອນ.....5

ການໃຫ້ນ້ຳ ແລະຝຸ່ນ.....5

ການບົວລະບັດຮັກສາ.....6

ພະຍາດ ແລະແມງໄມ້.....7

ການເກັບກ່ຽວ.....7

ດ້ານການຕະຫຼາດຮອງຮັບ.....8

ການລົງທຶນ ແລະຜົນຕອບແທນ.....9

ການນຳໃຊ້ປະໂຫຍດ ແລະຄຸນຄ່າທາງໂພສະນະການ.....9

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້

ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ

ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003






ຮູບ.3. ຄຸນຄ່າທາງໂພສະນາການ ຂອງໝາກມັງກອນ

## 10. ການລົງທຶນ ແລະຜົນຕອບແທນ

ເນື່ອງຈາກຕົ້ນໝາກມັງກອນ ເປັນຕົ້ນໄມ້ໃຫ້ໝາກ ທີ່ໃຫ້ຜົນຜະລິດສູງເຖິງ 8.000 ເຖິງ 12.000 ກລ/ໄລ່, ເມື່ອອາຍຸໄດ້ 3 ປີ ຂຶ້ນໄປ. ປູກພຽງແຕ່ 10 ເດືອນ ກໍ່ສາມາດໃຫ້ໝາກໄດ້. ໃນປີທຳອິດໝາກມັງກອນຈະໃຫ້ຜົນຜະລິດປະມານ 4 _ 5 ໝາກຕໍ່ຕົ້ນ, ໃຫ້ຜົນຜະລິດ 5 ລຸ້ນ / ປີ ເມື່ອກ້າວເຂົ້າປີທີ 2 ແລະ 3 ຈະໃຫ້ຜົນຜະລິດປະມານ 20 ກລ ຕໍ່ຕົ້ນ ແລະໃນຮອບ 1 ປີ ສາມາດເກັບຜົນຜະລິດໄດ້ 13_15 ລຸ້ນ. ອາຍຸການໃຫ້ຜົນຜະລິດດົນເຖິງ 10 _ 15 ປີ. ຫາກຄິດໄລ່ລະດັບລາຄາ 800 ກີບ/ກລ ຊາວກະສິກອນທີ່ປູກກໍ່ຍັງມີກຳໄລບໍ່ຕໍ່າກວ່າ 37.500.000 ກີບ/ໄລ່ ໃນຊ່ວງເວລາປູກພຽງ 3 ປີ ກໍ່ສາມາດຖອນທຶນຄືນໄດ້ແລ້ວ. ແຕ່ການລົງທຶນທຳອິດຂ້ອນຂ້າງສູງປະມານ 20.000.000 ຫາ 30.000.000 ກີບ/ໄລ່.

## 11. ການນຳໃຊ້ປະໂຫຍດ ແລະຄຸນຄ່າທາງໂພສະນະການ

ຕົ້ນໝາກໝັງກອນ ນອກຈາກປູກເປັນໄມ້ມົງຄຸນແລ້ວ ຍັງໃຊ້ປູກເປັນໄມ້ໃຫ້ໝາກ ເພາະໝາກມັງກອນອຸດົມໄປດ້ວຍເສັ້ນໄຍອາຫານ ຊ່ວຍໃນການຂັບຖ່າຍໄດ້ສະດວກ, ຊ່ວນລຸດນໍ້າຕານໃນເລືອດ, ລຸດໄຂມັນ, ແຄລໍລີຕໍ່າ, ອຸດົມໄປດ້ວຍວິຕາມິນຊີ, ເຄໂລຟິນ. ເມັດດຳໆຢູ່ທາງໃນອຸດົມໄປດ້ວຍກົດໄຂມັນບໍ່ອີ່ມຕົວ, ສາມາດຕໍ່ຕ້ານປະຕິກິລິຍາ ອົກຊີເດຊັນ, ສາມາດດັບຄວາມຮ້ອນໃນຮ່າງກາຍ, ລຸດຜ່ອນການຫິວນໍ້າ ແລະສາມາດບຳລຸງສຸກຂະພາບຜິວພັນໃຫ້ສົດຊື່ນ.





# ເຕັກນິກການປູກໝາກມັງກອນ (Dragon Fruit)

ໝາກມັງກອນ “Dragon Fruit” ເປັນພືດຕະກຸນດຽວກັບຕົ້ນກະບອງເພັດຢູ່ໃນຕະກຸນ Hylocereus ssp. ລຳຕົ້ນສີຂຽວມີລັກສະນະອວບນໍ້າ, ເປັນລ່ຽມ 3 ລ່ຽມ ແລະມີໜາມຢູ່ຕາມລ່ຽມເປັນຈຸດໆ. ມີລັກສະນະຄ້າຍຄືກັນກັບຕົ້ນ **ໂບຕັນ** ທີ່ໃຊ້ປູກເປັນໄມ້ດອກໄມ້ປະດັບ, ແຕ່ວ່າ **ຕົ້ນໂບຕັນ** ພາຍຫຼັງດອກບານແລ້ວຈະຫ່ຽວແຫ້ງ ແລະຫຼົ່ນລົງໄປໂດຍບໍ່ເປັນໝາກ.

ສາຍພັນໝາກມັງກອນທີ່ນິຍົມປູກກັນໃນປະຈຸບັນ ມີໝາກມັງກອນສາຍພັນຫວຽດນາມເປັນຕົ້ນຕໍ.

## 1. ລັກສະນະດອກ ແລະໝາກຂອງໝາກມັງກອນ

ເມື່ອດອກມັນບານເຕັມສ່ວນແລ້ວກໍ່ຈະຫຼົ່ນ ໂດຍມີກີບດອກເປັນຮູບກົມ ຫຼືຮູບຊົງໄຂ່, ຂະໜາດເສັ້ນຜ່າສູນກາງປະມານ 7_10 ຊັງຕີແມັດ ແລະຍາວປະມານ 10_15 ຊັງຕີແມັດ. ມີນໍ້າໜັກລະຫວ່າງ 200_250 ກຣາມ ເປືອກມີສີແດງສົດໃສ ໂດຍມີບາງສ່ວນຂອງກີບດອກນ້ອຍສີຂຽວຕິດຢູ່ຕາມໝາກເບິ່ງແລ້ວສວຍສົດງົດງາມ, ຖ້າຜ່າໝາກເບິ່ງຈະສັງເກດເຫັນວ່າ: ນວນຈະມີສີຂາວຂຸ້ນພາຍໃນມີເມັດນ້ອຍໆ ສີດຳຄ້າຍຄືກັບໝາກງາດຳກະຈາຍຕົວຢູ່ທົ່ວໄປເປັນຈຳນວນຫຼວງຫຼາຍ.




ຮູບ.1. ລັກສະນະໝາກຂອງໝາກມັງກອນ

## 2. ວິວັດທະນາການຂອງດອກ

ໃນເມື່ອຕົ້ນໝາກມັງກອນ ມີອາຍຸແກ່ສົມບູນພ້ອມທີ່ຈະເລີ່ມອອກຕາດອກ ຊຶ່ງໃນໄລຍະທຳອິດຕາດອກ ຈະມີສີເຫຼືອງ ສ່ວນຍອດເປັນສີມ້ວງແດງ ຫຼັງຈາກຕາດອກຍາວປະມານ 1 ຊັງຕີແມັດ ການຈະເລີນເຕີບໂຕຈະໄວທີ່ສຸດ ແລະໄລຍະດັ່ງກ່າວສີຂອງຕາດອກຈະມີການພັດທະນາຈົນກາຍມານ 17_25 ຊັງຕີແມັດ. ບາງພັນມີກິ່ນຫອມ, ການຖ່າຍແທລະອອງເກສອນສາມາດເຮັດໄດ້ໂດຍອາໃສແມງໄມ້ ຫຼືແຮງລົມ ແຕ່ສ່ວນໃຫຍ່ຄວນນຳໃຊ້ແຮງງານຄົນ ຊ່ວຍໃນການປະສົມເກສອນ **ໂດຍໃຊ້ສຳລີປ້າຍເກສອນຜູ້** ແລ້ວນຳໄປແຕະໃສ່ເກສອນແມ່ ພາຍຫຼັງຈາກການຖ່າຍລະອອງເກສອນໄດ້ 1 ອາທິດ ການປະຕິສົນທິຈະເກີດຂຶ້ນຢ່າງສົມບູນ ຮັງໄຂ່ທີ່ມີສີຂຽວຈະຂະຫຍາຍໃຫຍ່ຂຶ້ນ ຫຼັງຈາກການປະຕິສົນທິແລ້ວ 25 _ 30 ວັນ ໝາກທີ່ມີສີຂຽວຈະປ່ຽນເປັນສີແດງ ແລ້ວກໍ່ເລີ່ມເກັບກ່ຽວຜົນຜະລິດໄດ້.



ປະມານ 1 _ 2 ອາທິດ ຊຶ່ງສີຂອງເປືອກຈະອອກເປັນສີເຫຼືອງໜ້ອຍໜຶ່ງ. ຄວາມຫວານຈະສູງປະມານ 16 _ 18 ອົງສາບຣິກ. ເມື່ອຕັດຈາກຕົ້ນຄວນແຊ່ເຢັນປະມານ 1 ວັນ ແລ້ວຈຶ່ງຮັບປະທານ ຈຶ່ງຈະເຮັດໃຫ້ມີລົດຊາດແຊບຂຶ້ນ.

## 9. ດ້ານການຕະຫຼາດຮອງຮັບ

ຕົ້ນໝາກມັງກອນຖືວ່າ ເປັນພືດສິນຄ້າຊະນິດໃໝ່ ທີ່ມີຄວາມຕ້ອງການ ຂອງຕະຫຼາດທັງພາຍໃນ ແລະຕ່າງປະເທດ. ສຳລັບປະເທດຫວຽດນາມມີການປູກເປັນສິນຄ້າມາແຕ່ດົນນານ ຈົນກາຍເປັນໝາກໄມ້ທີ່ມີມູນຄ່າການສົ່ງອອກທີ່ສູງທີ່ສຸດຂອງຫວຽດນາມ. ປະເທດທີ່ນຳເຂົ້າໝາກມັງກອນຈາກຫວຽດນາມສ່ວນໃຫຍ່ແມ່ນເຂດອາເຊຍເຊັ່ນ: ຈີນ, ຮົ່ງກົງ, ສິງກະໂປ, ມາເລເຊຍ, ຈີນໄຕ້ຫວັນ, ຍີ່ປຸ່ນ ແລະລວມທັງປະເທດແຖບຢູໂລບເຊັ່ນ: ຝຣັ່ງ ແລະສຳລັບປະເທດໄທ ກໍ່ໄດ້ນຳເຂົ້າເຊັ່ນກັນ. ແຕ່ໃນປະຈຸບັນກໍ່ມີການລົງທຶນປູກໝາກໄມ້ຊະນິດນີ້ກັນແຜ່ຫຼາຍໃນປະເທດໄທ, ແຕ່ຄຸນນະພາບຍັງຖືວ່າເປັນຮອງຈາກປະເທດຫວຽດນາມ.

## 7. ພະຍາດ ແລະແມງໄມ້

ສຳລັບພະຍາດ ແລະແມງໄມ້ ຂອງໝາກມັງກອນນັ້ນ ພົບວ່າບໍ່ຫຼາຍປານໃດມີພຽງແຕ່ມົດ ແລະນົກ. ສຳລັບມົດຖ້າພົບເຫັນໃນປະລິມານທີ່ຫຼາຍກໍ່ອາດສ້າງຄວາມເສຍຫາຍໃຫ້ແກ່ຜູ້ປູກໄດ້. ສະນັ້ນ, ຄວນຈະສີດພົ່ນດ້ວຍສານເຄມີພ້ອມທັງສານຈັບໃບ. ສ່ວນນົກກໍຖືວ່າເປັນສັດຕູທີ່ສຳຄັນເຊັ່ນກັນ ເພາະນົກຈະເຂົ້າທຳລາຍໃນຊ່ວງທີ່ໝາກກຳລັງໃກ້ຈະແກ່ ຊຶ່ງວິທີປ້ອງກັນຄວນຫໍ່ໝາກໄວ້.

## 8. ການເກັບກ່ຽວ

ອາຍຸຂອງໝາກມັງກອນປະມານ 10 ເດືອນ ກັບ 10 ວັນ ກໍ່ສາມາດເກັບກ່ຽວຜົນຜະລິດໄດ້. ໃນຊ່ວງກ່ອນການເກັບກ່ຽວ ຄວນບຳລຸງດ້ວຍຝຸ່ນສູດ 14_14_21 ການເກັບກ່ຽວຜົນຜະລິດທີ່ຖືກຕ້ອງແມ່ນພາຍຫຼັງໃຫ້ໝາກໄດ້ 1 ເດືອນ ແລ້ວສີຂອງມັນກໍ່ຈະປ່ຽນສີເປັນສີບົວທັງໜ່ວຍ ຜູ້ທີ່ບໍ່ຊຳນານຄິດວ່າໝາກແກ່ແລ້ວຈຶ່ງເກັບໄປຈຳໜ່າຍ ເຮັດໃຫ້ຄຸນນະພາບຂອງໝາກບໍ່ດີປານໃດ ເພາະພາຍຫຼັງທີ່ໝາກປ່ຽນເປັນສີບົວແລ້ວ ໝາກມັງກອນກໍຈະປ່ຽນມາເປັນສີຂຽວອີກຄັ້ງໜຶ່ງ ແລ້ວກັບກາຍມາເປັນສີບົວຄັ້ງທີ 2 ພາຍໃນໄລຍະເວລາ 7 _ 10 ວັນ. ການກັບມາເປັນສີບົວຄັ້ງທີ 2 ຈຶ່ງເປັນໄລຍະເວລາທີ່ຖືກຕ້ອງໃນການເກັບກ່ຽວຜົນຜະລິດເພື່ອຈຳໜ່າຍ ເພາະເປັນຊ່ວງຂອງຄຸນນະພາບໃນໝາກສູງ ໂດຍມີລົດຊາດຫວານຫອມ ແລະການເກັບກ່ຽວຄວນໃຊ້ມີດຕັດບໍລິເວນກ້ານ. ໝາກມັງກອນໜຶ່ງໜ່ວຍຈະມີນ້ຳໜັກປະມານ 400 _ 1.200 ກຼາມ. ໜ່ວຍໝາກມັງກອນທີ່ສຸກແກ່ຈະມີສີແດງສົດເປັນທີ່ດຶງດູດໃຈ ແຕ່ວ່າຄວາມຫວານຍັງບໍ່ພຽງພໍ ແຕ່ຖ້າຕ້ອງການໃຫ້ມີຄວາມຫວານຫຼາຍຂຶ້ນ ຫຼັງຈາກປ່ຽນເປັນສີແດງຄວນປ່ອຍໃຫ້ຢູ່ເທິງຕົ້ນ



## 3. ວິທີການປູກ

ຕົ້ນໝາກມັງກອນເປັນພືດທີ່ລຳຕົ້ນອ່ອນແອ ແລະບໍ່ແຂງແຮງ. ສະນັ້ນ, ການປູກຈຳເປັນຕ້ອງໄດ້ໃຊ້ໄມ້ເຮັດຫຼັກໃຫ້ເປັນທີ່ຍຶດເກາະຂອງລຳຕົ້ນ ຊຶ່ງຫຼັກຕ້ອງແມ່ນໄມ້ເນື້ອແຂງ ຫຼືເສົາຊີເມັນກໍໄດ້, ຝັງທໍ່ຊີເມັນລົງດິນປະມານ 0.5 ແມັດ, ເສົາສູງປະມານ 1.5 _ 2 ແມັດສ່ວນເທິງຂອງເສົາເຮັດເປັນຮ້ານ ເພື່ອໃຫ້ກິ່ງເກາະແຜ່ຂະຫຍາຍຕົວອອກໄປ. ໄລຍະປູ 3x3 ແມັດ / ຫຼັກ.ໄລຍະຂອງແຕ່ລະຂຸມ 30 x 30 x 30 ຊັງຕີແມັດ ອ້ອມຫຼັກໆລະ 4 ຂຸມ ສຳລັບປູກຂຸມລະ 1 ຕົ້ນ. ເນື້ອທີ່ 1 ໄລ່ສາມາດປູກໄດ້ 100 ຫຼັກ ຕໍ່ 400 ຕົ້ນ. ຮອງພື້ນຂຸມດ້ວຍຝຸ່ນໝັກ. ຫຼັງຈາກນັ້ນ, ກໍ່ນຳເອົາແນວພັນລົງໃນຂຸມແລ້ວມັດຕິດກັບຫຼັກ ບໍ່ຄວນຈະປູກໃນລະດັບເລິກກວາລະດັບດິນໃນຖົງຊຳ. ພາຍຫຼັງປູກແລ້ວຄວນໃຊ້ເຟືອງຄຸມຕົ້ນໃນລັດສະໝີ 50 ຊັງຕີແມ້ດ ເພື່ອໃຫ້ບໍລິເວນຕົ້ນຊຸມເຢັນ ແລະບັງແສງແດດໃຫ້ປະມານ 1 _ 2 ອາທິດ. ແຕ່ການປູກທີ່ດີຕ້ອງມີການຍົກຮ່ອງ ເພື່ອປ້ອງກັນນ້ຳຂັງໃນຊ່ວງລະດູຝົນ.



ຮູບ.2. ວິທີການປູກໝາກມັງກອນ

## 4. ດິນທີ່ເໝາະສົມແກ່ການປູກໝາກມັງກອນ

ຕົ້ນໝາກມັງກອນ ເປັນໄມ້ໃຫ້ໝາກທີ່ບໍ່ເລືອກຊະນິດຂອງດິນບໍ່ວ່າຈະເປັນດິນຄ້ອຍຊັນ, ດິນເຄັມ, ດິນຊາຍ ຫຼືດິນໜຽວກໍ່ສາມາດຈະເລີນເຕີບໂຕ ແລະໃຫ້ຜົນຜະລິດໄດ້, ແຕ່ວ່າການລະບາຍນໍ້າຕ້ອງດີ, ນໍ້າບໍ່ຂັງ, ບໍ່ປຽກຊຸ່ມຫຼາຍ. ຖ້າແມ່ນດິນຊາຍແກມຕົມຍິ່ງດີທີ່ສຸດ ເພາະສາມາດລະບານໍ້າໄດ້ດີ.

## 5. ການໃຫ້ນໍ້າ ແລະຝຸ່ນ

ຕົ້ນໝາກມັງກອນເປັນພືດຕະກຸນດຽວກັນກັບກະບອງເພັດ ໃນເຂດຮ້ອນທົນແລ້ງໄດ້ດີ ແຕ່ຄວນນໍາເສດຫຍ້າມາປົກຄຸມໄວ້ເປັນການດີ ແລະໃນຊ່ວງທໍາອິດຂອງກາປູກຄວນໃຫ້ນໍ້າ 3_4 ວັນຕໍ່ຄັ້ງ, ເມື່ອຮາກຂະຫຍາຍຕົວລົງສູ່ດິນແລ້ວໃຫ້ສັງເກດທີ່ຜິວດິນ, ຖ້າດິນແຫ້ງຫຼາຍຈຶ່ງໃຫ້ນໍ້າ ແຕ່ຖ້າໃຫ້ນໍ້າໃນປະລິມານທີ່ຫຼາຍເກີນໄປ ເກີດມີນໍ້າຂັງຈະເຮັດໃຫ້ບໍລິເວນລໍາຕົ້ນປ່ຽນສີຈາກສີຂຽວເປັນສີເຫຼືອງ ແລະເກີດອາການຮາກເນົ່າພາຍໃນ 1 ອາທິດ. ຫາກມີອາການຮາກເນົ່າເກີດຂຶ້ນຕ້ອງຕັດສ່ວນທີ່ເນົ່ານັ້ນຖິ້ມ ເພື່ອບໍ່ໃຫ້ມີການຂະຫຍາຍໄປບ່ອນອື່ນ ແລ້ວເມື່ອແຜແຫ້ງແລ້ວ ຈຶ່ງນໍາເອົາໄປປູກໃໝ່. ແຕ່ຖ້າໃຫ້ນໍ້າໃນປະລິມານທີ່ໜ້ອຍເກີນໄປລໍາຕົ້ນຈະແຫ້ງແບນ ປ່ຽນເປັນສີເຫຼືອງຈົນແຫ້ງຕາຍຈະຟື້ນຟູໃຫ້ກັບຄືນສູ່ສະພາບເດີມຕ້ອງໄດ້ໃຊ້ເວລາຍາວນານ. ດັ່ງນັ້ນ, ປະລິມານນໍ້າທີ່ໃຫ້ຕ້ອງຕ້ອງເໝາະສົມ, ຊຶ່ງຂຶ້ນກັບສະ ພາບຂອງດິນ ແລະຄວາມຊຸ່ມໃນແຕ່ລະທ້ອງຖິ່ນ.

ຕາມປົກກະຕິແລ້ວ ຕົ້ນໝາກມັງກອນ ມີຄວາມແຂງແຮງ ໃນການຈະເລີນເຕີບໂຕ ບໍ່ໃຫ້ຝຸ່ນກໍ່ສາມາດອອກດອກ ແລະຕິດໝາກໄດ້, ແຕ່ຖ້າຕ້ອງການຜະລິດໃຫ້ໄດ້ຮັບຄຸນນະພາບ, ເປັນໝາກຫຼາຍ ແລະມີຂະໜາດ



ໃຫຍ່ ການໃສ່ຝຸ່ນກໍ່ເປັນສິ່ງທີ່ສໍາຄັນທີ່ສຸດ. ໃນຊ່ວງທໍາອິດຂອງການປູກຄວນໃຫ້ຝຸ່ນສູດ 46_00_00 ຫຼື 15_00_00 ເດືອນລະຄັ້ງ. ແຕ່ຈະຕ້ອງນໍາໃຊ້ຢາງຖືກຕ້ອງ ຄືຊ່ວງ **ເດືອນພະຈິກ, ກຸ່ມພາ** ເປັນຊ່ວງທີ່ມີການຈະເລີນເຕີບໂຕທາງຮາກ ແລະລໍາຕົ້ນການໃຫ້ຝຸ່ນເລັ່ງການຈະເລີນເຕີບໂຕຄື ຝຸ່ນອິນຊີ N, P, K ໃນປະລິມານເທົ່າໆກັນ ຄືສູດ 15_15_15 ຫຼັກລະ 1_2 ບ່ວງແກງ ແລະໃນຊ່ວງ **ເດືອນມີນາ** ເປັນໄລຍະທີ່ເລັ່ງຕາດອກ ຄືຝຸ່ນອິນຊີທີ່ມີທາດແຄຊຽມ / mg ສູງ ວິທີການໃຫ້ຄືການປະສົມກັບນໍ້າໃນອັດຕາສ່ວນທີ່ເໝາະສົມ ໂດຍຄໍານຶງເຖິງໄລຍະການຈະເລີນເຕີບໂຕເປັນຫຼັກ. ນອກຈາກຝຸ່ນອິນຊີແລ້ວກໍ່ສາມາດໃສ່ຝຸ່ນຄອກເສີມ 2_3 ຄັ້ງ/ເດືອນ ໃນອັດຕາ 1 ກະຕ່າຕໍ່ຫຼັກ.

## 6. ການບົວລະບັດຮັກສາ

ໃນໄລຍະທີ່ລໍາຕົ້ນຍັງເລືອເກາະຕິດກັບເສົາ ບໍ່ຄວນໃຫ້ມີການແຕກແໜງ ຫຼືເມື່ອມີແໜງແຕກຂຶ້ນໃໝ່ກໍ່ຄວນຕັດຖິ້ມ ເພື່ອຕ້ອງການໃຫ້ລໍາຕົ້ນມີຄວາມແຂງແຮງເລືອຂຶ້ນສູ່ຍອດເສົາ ໂດຍສ່ວນທີ່ຍອດເສົາມີໂຕຮອງຮັບທີ່ທໍ່ດ້ວຍຊີເມັນ ມີຊ່ອງຫວ່າງໃຫ້ 4 ຊ່ອງ ຕາມຈໍານວນທີ່ປູກ. ຄວນຈະມີການເສຍຫຍ້າ, ພວນດິນ ແລະຊອກເຟືອງ ແລະໃບໄມ້ແຫ້ງມາປົກຄຸມເພື່ອໃຫ້ມັນມີຄວາມຊຸ່ມຢູ່ສະເໝີ.